ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 2755 /ກງ
ນະຄອນຫຼວງວຽງຈັນ, ວັນທີ 31 ກໍລະກົດ 2024

# ແຈ້ງການ

ເຖິງ: - ຫົວໜ້າກົມພາສີ
- ຜູ້ປະກອບການນຳເຂົ້າ ແລະ ສົ່ງອອກ
- ຜູ້ບໍລິການຂົນສົ່ງສິນຄ້າລະຫວ່າງປະເທດ ຫຼື ຕົວແທນ

ເລື່ອງ: ການແຈ້ງພາສີໂດຍສັງເຂບລ່ວງໜ້າກ່ອນສິນຄ້າມາເຖິງດ່ານພາສີຊາຍແດນ

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 81/ສພຊ, ລົງວັນທີ 29 ມິຖຸນາ 2020;
- ອີງຕາມ ດຳລັດນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງການເງິນ ສະບັບເລກທີ 600/ນຍ, ລົງວັນທີ 14 ຕຸລາ 2021;
- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີການຄຸ້ມຄອງ ແລະ ຕ້ານການຮົ່ວໄຫຼຂອງງົບປະມານແຫ່ງລັດ ສະບັບເລກທີ 18/ນຍ, ລົງວັນທີ 16 ກັນຍາ 2021;
- ອີງຕາມ ບົດລາຍງານຂອງກົມພາສີ ສະບັບເລກທີ 07144/ກພສ, ລົງວັນທີ 12 ມິຖຸນາ 2024.

ເພື່ອຈັດຕັ້ງຜັນຂະຫຍາຍ ມາດຕາ 25 ຂອງກົດໝາຍວ່າດ້ວຍພາສີ ສະບັບເລກທີ 81/ສພຊ, ລົງວັນທີ 29 ມິຖຸນາ 2020 ກ່ຽວກັບການແຈ້ງພາສີໂດຍສັງເຂບ ແນໃສ່ຍົກສູງການອຳນວຍຄວາມສະດວກທາງດ້ານພາສີ ແລະ ການຄ້າ, ການຄຸ້ມຄອງການຂົນສົ່ງສິນຄ້າ ແລະ ການບໍລິຫານຄວາມສ່ຽງທາງພາສີ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

ລັດຖະມົນຕີກະຊວງການເງິນ ອອກແຈ້ງການ ດັ່ງນີ້:

1. ຜູ້ບໍລິການຂົນສົ່ງສິນຄ້າລະຫວ່າງປະເທດ ຫຼື ຕົວແທນ ທີ່ໄດ້ຮັບອະນຸຍາດດຳເນີນກິດຈະການຂົນສົ່ງລະຫວ່າງປະເທດ ຈາກຂະແໜງການກ່ຽວຂ້ອງ ຊຶ່ງລວມມີ: ບໍລິສັດຂົນສົ່ງທາງບົກ, ບໍລິສັດຂົນສົ່ງທາງລົດໄຟ ແລະ ບໍລິສັດຂົນສົ່ງທາງອາກາດ ເປັນຜູ້ຮັບຜິດຊອບແຈ້ງພາສີໂດຍສັງເຂບລ່ວງໜ້າກ່ອນສິນຄ້າມາເຖິງ ດ່ານພາສີຊາຍແດນ ຊຶ່ງເປັນການແຈ້ງຂໍ້ມູນກ່ຽວກັບ ການຂົນສົ່ງ ແລະ ສິນຄ້າ ທີ່ຈະນຳເຂົ້າ-ສົ່ງອອກ ຕໍ່ເຈົ້າໜ້າທີ່ພາສີ ຜ່ານລະບົບເອເລັກໂຕຣນິກ;
2. ຜູ້ບໍລິການຂົນສົ່ງສິນຄ້າລະຫວ່າງປະເທດ ຫຼື ຕົວແທນ ຕ້ອງລົງທະບຽນເປັນຜູ້ນຳໃຊ້ລະບົບແຈ້ງພາສີເອເລັກໂຕຣນິກ (NSWA$^{+}$) ນຳກົມພາສີ. ສຳລັບ ຜູ້ບໍລິການຂົນສົ່ງສິນຄ້າຢູ່ຕ່າງປະເທດ ທີ່ມີຈຸດປະສົງຂົນສົ່ງ

ສິນຄ້າ ເຂົ້າ-ອອກ ສປປ ລາວ ຕ້ອງມອບໝາຍໃຫ້ຜູ້ບໍລິການຂົນສົ່ງສິນຄ້າລະຫວ່າງປະເທດໃດໜຶ່ງ ຢູ່ ສປປ ລາວ ເປັນຕົວແທນໃນແຈ້ງພາສີໂດຍສັງເຂບລ່ວງໜ້າ ຜູ້ບໍລິການຂົນສົ່ງສິນຄ້າລະຫວ່າງປະເທດ ຫຼື ຕົວແທນ ສາມາດດາວໂຫຼດແບບຟອມລົງທະບຽນນຳໃຊ້ລະບົບ NSWA+ ຜ່ານເວັບໄຊຂອງກົມພາສີ www.customs.gov.la.

3. ການແຈ້ງພາສີໂດຍສັງເຂບລ່ວງໜ້າ ຕ້ອງປະຕິບັດຕາມກຳນົດເວລາ ດັ່ງນີ້:
   - 3.1 ການນຳເຂົ້າ: ຜູ້ບໍລິການຂົນສົ່ງສິນຄ້າລະຫວ່າງປະເທດ ຫຼື ຕົວແທນ ຕ້ອງແຈ້ງພາສີໂດຍສັງເຂບລ່ວງໜ້າ ຕາມກຳນົດເວລາ ຄື:
     - 3.1.1 ສຳລັບການຂົນສົ່ງສິນຄ້າທາງອາກາດ ຕ້ອງແຈ້ງພາສີໂດຍສັງເຂບລ່ວງໜ້າ ຢ່າງໜ້ອຍ ສອງ (2) ຊົ່ວໂມງ ກ່ອນສິນຄ້າມາເຖິງສະໜາມບິນສາກົນແຫ່ງທຳອິດບ່ອນແຈ້ງເຂົ້າ;
     - 3.1.2 ສຳລັບການຂົນສົ່ງສິນຄ້າທາງບົກ ຕ້ອງແຈ້ງພາສີໂດຍສັງເຂບລ່ວງໜ້າ ຢ່າງໜ້ອຍ ຊາວສີ່ (24) ຊົ່ວໂມງ ກ່ອນສິນຄ້າມາເຖິງດ່ານພາສີຊາຍແດນແຫ່ງທຳອິດບ່ອນແຈ້ງເຂົ້າ;
     - 3.1.3 ສຳລັບການຂົນສົ່ງສິນຄ້າທາງລາງ(ລົດໄຟ) ຕ້ອງແຈ້ງພາສີໂດຍສັງເຂບລ່ວງໜ້າ ຢ່າງໜ້ອຍ ຊາວສີ່ (24) ຊົ່ວໂມງ ກ່ອນສິນຄ້າມາເຖິງສະຖານີລົດໄຟແຫ່ງທຳອິດບ່ອນແຈ້ງເຂົ້າ.
   - 3.2 ການສົ່ງອອກ: ຜູ້ບໍລິການຂົນສົ່ງສິນຄ້າລະຫວ່າງປະເທດ ຫຼື ຕົວແທນ ຕ້ອງແຈ້ງພາສີໂດຍສັງເຂບລ່ວງໜ້າຢ່າງໜ້ອຍ ຊາວສີ່ (24) ຊົ່ວໂມງ ກ່ອນສິນຄ້າມາເຖິງ ດ່ານພາສີຊາຍແດນ ຫຼື ຫ້ອງການພາສີ ແຫ່ງທຳອິດບ່ອນແຈ້ງພາສີຂາອອກ. ຫຼັງຈາກນັ້ນ ຜູ້ແຈ້ງພາສີ ສາມາດແຈ້ງພາສີເປັນລາຍລະອຽດລ່ວງໜ້າ ພາຍໃນໄລຍະເວລາ ເຈັດ (7) ວັນລັດຖະການຕາມກົດໝາຍວ່າດ້ວຍພາສີ.
   - 3.3 ການຜ່ານແດນສາກົນ: ໃຫ້ຜູ້ບໍລິການແຈ້ງພາສີ ດຳເນີນການແຈ້ງພາສີເປັນລາຍລະອຽດ ຕາມລະບຽບການກຳນົດ ໂດຍບໍ່ຈຳເປັນຕ້ອງແຈ້ງພາສີໂດຍສັງເຂບ.

4. ມາດຕະການຕໍ່ການແຈ້ງພາສີໂດຍສັງເຂບລ່ວງໜ້າ ບໍ່ຖືກຕ້ອງຕາມກຳນົດເວລາ

ກໍລະນີ ຜູ້ບໍລິການຂົນສົ່ງສິນຄ້າລະຫວ່າງປະເທດ ຫຼື ຕົວແທນ ແຈ້ງພາສີໂດຍສັງເຂບລ່ວງໜ້າ ບໍ່ຖືກຕ້ອງເວລາທີ່ໄດ້ກຳນົດທີ່ລະບຸໃນຂໍ້ 3 ຄັ້ງທຳອິດ ມອບໃຫ້ຫົວໜ້າດ່ານພາສີ ຫຼື ຫ້ອງການພາສີ ບ່ອນຮັບແຈ້ງພາສີ ສຶກສາອົບຮົມ ແລະ ເຮັດບົດບັນທຶກຕັກເຕືອນເປັນລາຍລັກອັກສອນ. ພ້ອມກັນນັ້ນ ຜູ້ບໍລິການຂົນສົ່ງສິນຄ້າລະຫວ່າງປະເທດ ຫຼື ຕົວແທນ ຕ້ອງດຳເນີນການແຈ້ງພາສີໂດຍສັງເຂບທັນທີ ທີ່ສິນຄ້າມາເຖິງ.

ຖ້າພົບເຫັນການກະທຳຜິດຊ້ຳອີກ ມອບໃຫ້ຫົວໜ້າດ່ານພາສີ ຫຼື ຫ້ອງການພາສີ ກ່ຽວຂ້ອງສັງລວມລາຍງານມາຍັງກົມພາສີ ເພື່ອດຳເນີນມາດຕະການຕາມກົດໝາຍ ແລະ ລະບຽບການກຳນົດ.

5. ຂໍ້ມູນ ແລະ ຮູບແບບ ການແຈ້ງພາສີໂດຍສັງເຂບລ່ວງໜ້າ

ຜູ້ບໍລິການຂົນສົ່ງສິນຄ້າລະຫວ່າງປະເທດ ຫຼື ຕົວແທນ ຕ້ອງດຳເນີນການແຈ້ງພາສີໂດຍສັງເຂບລ່ວງໜ້າດ້ວຍລະບົບເອເລັກໂຕຣນິກຕາມຮູບແບບ (Format) ທີ່ລັດຖະການພາສີກຳນົດ. ພ້ອມທັງ ສະແກນ (scan) ເປັນເອກະສານເອເລັກໂຕຣນິກ ໃນຮູບແບບ portable document format (pdf). ຈາກນັ້ນ, ໃຫ້ອັບໂຫຼດຂໍ້ມູນລົງໃນລະບົບ NSWA+ ຢ່າງຖືກຕ້ອງ ແລະ ຄົບຖ້ວນ ເປັນຕົ້ນ: ໃບຂົນສົ່ງສິນຄ້າທາງບົກ (Truck Bill of Lading), , ໃບຂົນສົ່ງສິນຄ້າທາງອາກາດ (Airway Bill) ຫຼື ໃບຂົນສົ່ງທາງລາງ (Railway Bill). ຂໍ້ມູນທີ່ລະບຸໃນໃບຂົນ ສົ່ງຕ້ອງສອດຄ່ອງກັບມາດຕະຖານສາກົນ ໂດຍສະເພາະແມ່ນມາດຕະຖານດ້ານຂໍ້ມູນຂອງອົງການພາສີໂລກ (WCO Data Model) ຊຶ່ງຕ້ອງປະກອບດ້ວຍຂໍ້ມູນຕົ້ນຕໍ ຄື: ຊື່ ແລະ ທີ່ຢູ່ ຜູ້ຮັບສິນຄ້າ(ຜູ້ນຳເຂົ້າ), ຊື່ ແລະ ທີ່ຢູ່ ຂອງຜູ້ສົ່ງສິນຄ້າ (ຜູ້ສົ່ງອອກ) , ຊື່ ແລະ ທີ່ຢູ່ ຂອງຜູ້ບໍລິການຂົນສົ່ງສິນຄ້າ, ຮູບແບບການຂົນສົ່ງ, ສະຖານທີ່ຂົນສິນຄ້າຂຶ້ນ-ລົງ, ວັນທີຂົນສົ່ງ ແລະ ເຄື່ອນຍ້າຍ, ວິທີການບັນຈຸ, ຫຸ້ມຫໍ່, ຊື່ ແລະ ປະເພດສິນຄ້າ, ຈຳນວນ ແລະ ນ້ຳໜັກ.

ກໍລະນີ ມີການເຊື່ອມໂຍງລະຫວ່າງລະບົບເອເລັກໂຕຣນິກຂອງຜູ້ບໍລິການຂົນສົ່ງສິນຄ້າລະຫວ່າງປະເທດ ເຂົ້າກັບລະບົບ NSWA⁺ ຜູ້ບໍລິການຂົນສົ່ງສິນຄ້າລະຫວ່າງປະເທດ ຫຼື ຕົວແທນ ສາມາດສົ່ງຂໍ້ມູນຜ່ານລະບົບດັ່ງກ່າວແບບອັດຕະໂນມັດ.

ພາຍຫຼັງສຳເລັດການປະກອບຂໍ້ມູນການແຈ້ງພາສີໂດຍສັງເຂບລ່ວງໜ້າ ພ້ອມທັງ ຄັດຕິດເອກະສານປະກອບແລ້ວ, ຜູ້ບໍລິການຂົນສົ່ງສິນຄ້າລະຫວ່າງປະເທດ ຕ້ອງລົງລາຍເຊັນເອເລັກໂຕຣນິກເພື່ອຢັ້ງຢືນຄວາມຖືກຕ້ອງ; ຈາກນັ້ນ ລະບົບຈະອອກເລກທີ່ອ້າງອີງການແຈ້ງດັ່ງກ່າວ ເພື່ອປະກອບຂໍ້ມູນການແຈ້ງພາສີເປັນລາຍລະອຽດ. ຜູ້ບໍລິການຂົນສົ່ງລະຫວ່າງປະເທດ ຫຼື ຕົວແທນ ບໍ່ຈຳເປັນຕ້ອງພິມເອກະສານແຈ້ງພາສີໂດຍສັງເຂບ ເພື່ອຍື່ນຕໍ່ເຈົ້າໜ້າທີ່ພາສີ.

ສຳລັບການບັນຈຸສິນຄ້າທີ່ມີຫຼາຍເຈົ້າຂອງ ໃສ່ຕູ້ສິນຄ້າດຽວກັນ LCL (Less than a Container Load) ການແຈ້ງພາສີໂດຍສັງເຂບລ່ວງໜ້າ ຕ້ອງແຈ້ງຂໍ້ມູນຂອງສິນຄ້າແຕ່ລະລາຍການຕາມທີ່ກຳນົດໃນໃບຂົນສົ່ງສິນຄ້າ.

ສຳລັບການຂົນສົ່ງທາງອາກາດ ແລະ ຂົນສົ່ງທາງລາງ ທີ່ຂົນສົ່ງເປັນຂະບວນປະກອບດ້ວຍຫຼາຍຕູ້ສິນຄ້າ, ການແຈ້ງພາສີໂດຍສັງເຂບລ່ວງໜ້າ ຕ້ອງແຈ້ງຂໍ້ມູນການຂົນສົ່ງລວມ ແລະ ຂໍ້ມູນຂອງສິນຄ້າແຕ່ລະລາຍການຢ່າງລະອຽດ.

ສຳລັບການຂົນສົ່ງສິນຄ້າປະເພດນ້ຳມັນເຊື້ອໄຟ, ອາຍແກັດ, ທາດແຫຼວ, ແຮ່ທາດ, ຜະລິດຕະພັນໄມ້, ພາຫະນະ ຫຼື ອື່ນໆ ທີ່ບັນຈຸເປັນເບົ້າ (Bulk) ໂດຍນຳໃຊ້ພາຫະນະຂົນສົ່ງຫຼາຍຄັນພ້ອມກັນ ການແຈ້ງພາສີໂດຍສັງເຂບລ່ວງໜ້າ ຕ້ອງແຈ້ງຂໍ້ມູນສິນຄ້າເປັນແຕ່ລະຄັນ ແລະ ລະບຸຂໍ້ມູນທະບຽນພາຫະນະຂົນສົ່ງ ຢ່າງຄົບຖ້ວນ.

6. ການສົ່ງຂໍ້ມູນຜ່ານລະບົບເອເລັກໂຕຣນິກຈາກພາຍນອກ

ຜູ້ບໍລິການຂົນສົ່ງສິນຄ້າລະຫວ່າງປະເທດ ທີ່ ນຳໃຊ້ລະບົບເອເລັກໂຕຣນິກຂອງຕົນເອງເຂົ້າໃນການເກັບກຳ ແລະ ສົ່ງຂໍ້ມູນການຂົນສົ່ງ ເຊັ່ນ: ລະບົບ Manifest/CBTM ຂອງສະມາຄົມຜູ້ຈັດສົ່ງ ແລະ ຜູ້ຂົນສົ່ງລະຫວ່າງປະເທດ (LITFA) ຫຼື ລະບົບອື່ນ ສາມາດເຊື່ອມໂຍງລະບົບດັ່ງກ່າວ ກັບລະບົບ NSWA⁺ ເພື່ອການແລກປ່ຽນຂໍ້ມູນການຂົນສົ່ງສິນຄ້າໂດຍກົງຜ່ານລະບົບ ເພື່ອແຈ້ງພາສີໂດຍສັງເຂບ.

ສຳລັບຜູ້ບໍລິການຂົນສົ່ງສິນຄ້າລະຫວ່າງປະເທດ ທີ່ບໍ່ທັນມີລະບົບເອເລັກໂຕຣນິກຂອງຕົນ ຕ້ອງນຳໃຊ້ໂມດູນ Cargo Manifest ໃນລະບົບ NSWA⁺ ເຂົ້າໃນການແຈ້ງພາສີໂດຍສັງເຂບລ່ວງໜ້າ.

7. ການກວດກາການແຈ້ງພາສີໂດຍສັງເຂບລ່ວງໜ້າ

ເຈົ້າໜ້າທີ່ພາສີ (ເຈົ້າໜ້າທີ່ຄຸ້ມຄອງສາງ ຫຼື ເຈົ້າໜ້າທີ່ກວດກາສິນຄ້າ) ຕ້ອງດຳເນີນການກວດກາການແຈ້ງພາສີໂດຍສັງເຂບລ່ວງໜ້າ ດັ່ງນີ້:

- ກ່ອນສິນຄ້າມາເຖິງດ່ານພາສີຊາຍແດນ, ເຈົ້າໜ້າທີ່ພາສີ ຕ້ອງດຳເນີນການກວດກາຂໍ້ມູນ ແລະ ເອກະສານແຈ້ງພາສີໂດຍສັງເຂບລ່ວງໜ້າ ຢູ່ໂມດູນ Cargo Manifest ຂອງລະບົບ NSWA⁺ ເພື່ອປະຕິບັດການຄວບຄຸມທາງພາສີ ແລະ ກຳນົດເປົ້າໝາຍການກວດກາສິນຄ້າທີ່ເຫັນວ່າມີຄວາມສ່ຽງສູງຕໍ່ການລັກລອບ ໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍພາສີ ແລະ ລະບຽບການກຳນົດ;
- ພາຍຫຼັງສິນຄ້າມາຮອດດ່ານພາສີຊາຍແດນ, ເຈົ້າໜ້າທີ່ພາສີທີ່ປະຈຳຢູ່ຈຸດດັ່ງກ່າວ ຕ້ອງກວດກາສະພາບໂດຍລວມຂອງພາຫະນະບັນທຸກ, ຕູ້ສິນຄ້າ ແລະ ສະພາບສາຍລັອກ(ຖ້າມີ);
- ຖ້າເຫັນວ່າຖືກຕ້ອງ ໃຫ້ຢັ້ງຢືນການມາເຖິງຂອງສິນຄ້າຜ່ານລະບົບເອເລັກໂຕຣນິກ ແລະ ອະນຸຍາດໃຫ້ນຳສິນຄ້າເຂົ້າສູ່ລະບົບສາງ ຫຼື ສະຖານທີ່ ທີ່ລັດຖະການພາສີກຳນົດ;
- ກໍລະນີ ຂໍ້ມູນການແຈ້ງພາສີໂດຍສັງເຂບລ່ວງໜ້າ ບໍ່ລະອຽດ, ບໍ່ຄົບຖ້ວນ, ບໍ່ຊັດເຈນ ຫຼື ມີການປ່ຽນແປງ ໃຫ້ເຈົ້າໜ້າທີ່ພາສີ ແຈ້ງໃຫ້ຜູ້ບໍລິການຂົນສົ່ງສິນຄ້າລະຫວ່າງປະເທດ ຫຼື ຕົວແທນ ຮັບ

ຊາບ ເພື່ອສະໜອງຂໍ້ມູນໃຫ້ເຈົ້າໜ້າທີ່ພາສີ ດຳເນີນການດັດແກ້ໃຫ້ຖືກຕ້ອງ. ຖ້າຫາກຜູ້ບໍລິການຂົນສົ່ງສິນຄ້າລະຫວ່າງປະເທດ ຫຼື ຕົວແທນ ບໍ່ສາມາດສະໜອງຂໍ້ມູນ, ເອກະສານ ຫຼື ຄຳຊີ້ແຈງຕໍ່ຂໍ້ຜິດພາດດັ່ງກ່າວ ຈະຖືກດຳເນີນມາດຕະການຕາມກົດໝາຍ ແລະ ລະບຽບການກຳນົດ.

8. ການແກ້ໄຂກໍລະນີລະບົບຂັດຂ້ອງດ້ານເຕັກນິກ

ຜູ້ບໍລິການຂົນສົ່ງສິນຄ້າລະຫວ່າງປະເທດ ຫຼື ຕົວແທນ ໃຫ້ປະກອບຂໍ້ມູນໃສ່ແບບພິມໃບແຈ້ງພາສີໂດຍສັງເຂບ ຕາມແບບພິມທີ່ລັດຖະການພາສີກຳນົດ. ໃຫ້ກົມພາສີ ເປັນຜູ້ກຳນົດຮູບແບບຂອງແບບພິມໃບໃບແຈ້ງພາສີໂດຍສັງເຂບ ແລະ ອັບໂຫຼດເປັນເອກະສານເອເລັກໂຕຣນິກເຂົ້າໃສ່ເວັບໄຊ້ ຂອງກົມພາສີ www.customs.gov.la. ຜູ້ບໍລິການຂົນສົ່ງສິນຄ້າລະຫວ່າງປະເທດ ຫຼື ຕົວແທນ ສາມາດດາວໂຫຼດ ແລະ ນຳໃຊ້ໃບພິມແບບແຈ້ງພາສີໂດຍສັງເຂບໂດຍບໍ່ເສຍຄ່າ.

ພາຍຫຼັງສຳເລັດການປະກອບຂໍ້ມູນໃສ່ໃບແຈ້ງພາສີໂດຍສັງເຂບ, ຜູ້ຂົນສົ່ງສິນຄ້າລະຫວ່າງປະເທດ ຫຼື ຕົວແທນ ຕ້ອງເຊັນຢັ້ງຢືນຄວາມຖືກຕ້ອງ ພ້ອມທັງ ຄັດຕິດໃບຂົນສົ່ງສິນຄ້າ(Manifest) ແລ້ວຍື່ນໃຫ້ເຈົ້າໜ້າທີ່ພາສີດຳເນີນການກວດກາ.

ພາຍຫຼັງລະບົບເອເລັກໂຕຣນິກສາມາດນຳໃຊ້ໄດ້ປົກກະຕິ, ຜູ້ແຈ້ງພາສີຕ້ອງດຳເນີນຂັ້ນຕອນການແຈ້ງພາສີໂດຍສັງເຂບຜ່ານລະບົບເອເລັກໂຕຣນິກຕາມຂັ້ນຕອນຢ່າງຖືກຕ້ອງ.

9. ພາຍຫຼັງສຳເລັດການແຈ້ງພາສີໂດຍສັງເຂບ ຜູ້ບໍລິການຂົນສົ່ງສິນຄ້າລະຫວ່າງປະເທດ, ຕົວແທນ ຫຼື ຜູ້ບໍລິການສາງ ຕ້ອງສົ່ງຂໍ້ມູນການແຈ້ງພາສີໂດຍສັງເຂບ ແລະ ຂໍ້ມູນການຂົນສົ່ງສິນຄ້າ ໃຫ້ແກ່ຜູ້ແຈ້ງພາສີທົ່ວໄປ ຫຼື ຜູ້ບໍລິການແຈ້ງພາສີ ເພື່ອດຳເນີນຂັ້ນຕອນແຈ້ງພາສີເປັນລາຍລະອຽດຕາມລະບຽບການ (ໂດຍໃຫ້ລະບຸເລກທີອ້າງອີງຂອງໃບແຈ້ງພາສີໂດຍສັງເຂບໃສ່ຫ້ອງ 9.ກ ຂອງໃບແຈ້ງພາສີເປັນລາຍລະອຽດ ACDD).

10. ມອບໃຫ້ກົມພາສີ ສົມທົບກັບພາກສ່ວນກ່ຽວຂ້ອງເຜີຍແຜ່ແນະນຳ, ຝຶກອົບຮົມໃຫ້ຜູ້ບໍລິການຂົນສົ່ງສິນຄ້າລະຫວ່າງປະເທດ ຫຼື ຕົວແທນ, ຜູ້ນຳເຂົ້າ-ສົ່ງອອກ, ເຈົ້າໜ້າທີ່ພາສີ ຮັບຊາບຢ່າງທົ່ວເຖິງ ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດມີຄວາມຄ່ອງຕົວ ແລະ ມີປະສິດທິຜົນສູງ.

11. ແຈ້ງການສະບັບນີ້ ມີຜົນສັກສິດນຳໃຊ້ ນັບແຕ່ ວັນທີ 01 ຕຸລາ 2024 ເປັນຕົ້ນໄປ.

ລັດຖະມົນຕີ

ສັນຕິພາບ ພົມວິຫານ

ບ່ອນສົ່ງ:

- ປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ 1 ສະບັບ "ເພື່ອຊາບ"
- ປະທານສະມາຄົມຜູ້ຈັດສົ່ງ ແລະ ຂົນສົ່ງລະຫວ່າງປະເທດ 1 ສະບັບ "ເພື່ອຊາບ"